ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ກອງປະຊຸມຄະນະກຳມະການບໍລິຫານງານກອງທຶນໂລກ (ຄບກທລ) ແລະ ຄະນະກຳມະການຕິດຕາມກວດກາ ໄດ້ຈັດຂຶ້ນຮ່ວມກັນ ເພື່ອປຶກສາຫາລືບັນຫາຕ່າງໆກ່ຽວກັບການຫັນງານກະກຽມ ແລະ ການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຮອບໃໝ່ 2018-2020 ຂອງກອງທຶນໂລກ. ກອງປະຊຸມດັ່ງກ່າວນີ້ ໂດຍການເປັນປະທານຮ່ວມຂອງ ທ່ານ ດຣ. ສຸລານີ ຈັນສີ ແລະ ດຣ. Juliet FLEISCHL, ຮອງປະທານຄະນະກຳມະການປະສານງານກອງທຶນໂລກ.

I. **ວັນເວລາ:** ວັນພຸດ, ທີ 04 ເມສາ 2018, ເວລາ 09:00 ເຖິງ 12:00.

II. **ສະຖານທີ່:** ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

III. **ຜູ້ເຂົ້າຮ່ວມ:**

1. ຄະນະກຳມະການບໍລິຫານງານກອງທຶນໂລກ ຈຳນວນ 2 ທ່ານ;
2. ຄະນະກຳມະການຕິດຕາມກວດກາ ຈຳນວນ 5 ທ່ານ;
3. ຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆ ຈຳນວນ 20 ທ່ານ;
4. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈຳນວນ 3 ທ່ານ.

   ລວມທັງໝົດ 30 ທ່ານ.

IV. **ວາລະກອງປະຊຸມ:**

1. ການນຳສະເໜີຜົນຂອງການປະເມີນ ແລະ ການວິເຄາະ ບັນດາໂອກາດ ແລະ ອຸປະສັກ ທີ່ກ່ຽວຂ້ອງກັບການເຊື່ອມສານແຜນງານພະຍາດແຫ່ງຊາດເຂົ້າໃນການບໍລິຫານຄຸ້ມຄອງລະບົບສາທາລະນະສຸກ;
2. ການຂໍນຳໃຊ້ເງິນຮ່ວງລາຍໄດ້ຈາກແຜນງານຂອງ PSI;
3. ການສະເໜີຄວາມຄືບໜ້າກ່ຽວກັບການປິດເງິນຊ່ວຍເຫຼືອຂອງຮອບຜ່ານມາ ແລະ ເງິນຊ່ວຍເຫຼືອຮອບໃໝ່;
4. ບັນຫາອື່ນໆ ແລະ ການປິດກອງປະຊຸມ:
   - ການສະເໜີຄວາມຄືບໜ້າກ່ຽວກັບບົດສະເໜີໂຄງການຮ່ວມຂອງຫຼາຍປະເທດ ສຳລັບແຜນງານ HIV ແລະ TB;
   - ການສະເໜີຄວາມຄືບໜ້າກ່ຽວກັບການສະໝັກຂໍທຶນຊ່ວຍເຫຼືອນຳຝຣັ່ງ.

V. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບເນື້ອໃນທີ່ໄດ້ປຶກສາຫາລື:

1. **ການນຳສະເໜີຜົນຂອງການປະເມີນ ແລະ ການວິເຄາະ ບັນດາໂອກາດ ແລະ ອຸປະສັກ ທີ່ກ່ຽວຂ້ອງກັບການເຊື່ອມສານແຜນງານພະຍາດແຫ່ງຊາດເຂົ້າໃນການບໍລິຫານຄຸ້ມຄອງລະບົບສາທາລະນະສຸກ:**
   - ຊ່ຽວຊານໄດ້ສະເໜີແລະອະທິບາຍກ່ຽວກັບຄວາມໝາຍຂອງຄຳວ່າ ສິ່ງຈູງໃຈ (incentive) ແມ່ນບັນດາສິ່ງຈູງໃຈຕ່າງໆທີ່ຈະອຳນວຍຄວາມສະດວກໃຫ້ແກ່ພະນັກງານລັດທີ່ຈະປະສານງານ, ສື່ສານ ແລະ ເຮັດວຽກຮ່ວມກັນພາຍໃນກົມກອງຕ່າງໆໃຫ້ໄດ້ດີຂຶ້ນກວ່າເກົ່າກ່ຽວກັບການເຊື່ອມສານແຜນງານພະຍາດແຫ່ງຊາດເຂົ້າໃນການບໍລິຫານຄຸ້ມຄອງລະບົບສາທາລະນະສຸກ;
   - ເລື້ອງການຮ່ວມມືກັນລະຫວ່າງແຜນງານ TB ແລະ HIV: ທາງຊ່ຽວຊານໄດ້ຍົກເອົາບັນຫານີ້ມາຈາກບົດສະເໜີໂຄງການຂອງການຂໍທຶນໃນຮອບຜ່ານມາ ຊຶ່ງບັນຫາດັ່ງກ່າວນີ້ແມ່ນໄດ້ຖືກກຳນົດວ່າເປັນບັນຫາທີ່ຈະຕ້ອງໄດ້ສືບຕໍ່ເຮັດວຽກຮ່ວມກັນ ແຕ່ຜູ້ຕາງໜ້າຈາກສູນຕ້ານເອດໄດ້ແຈ້ງຕໍ່ທີ່ປະຊຸມວ່າບັນຫາດັ່ງກ່າວນີ້ແມ່ນໄດ້ຮັບການປັບປຸງແລ້ວ;
   - ບັນຫາ ແລະ ອຸປະສັກ ຂອງການເຊື່ອມສານແຜນງານພະຍາດແຫ່ງຊາດເຂົ້າໃນການບໍລິຫານຄຸ້ມຄອງລະບົບສາທາລະນະສຸກ ທີ່ຂັ້ນທ້ອງຖິ່ນ ທາງຊ່ຽວຊານແມ່ນບໍ່ໄດ້ເຮັດການປະເມີນທີ່ລະດັບທ້ອງຖິ່ນ ແລະ ການປະເມີນ ແລະ ວິເຄາະດັ່ງກ່າວນີ້ ແມ່ນໄດ້ເຮັດສະເພາະຂັ້ນສູນກາງເທົ່ານັ້ນ;
   - ຜົນຂອງການປະເມີນ ແລະ ວິເຄາະນີ້ ແມ່ນອາດຈະສາມາດປະຕິບັດໄດ້ ແຕ່ຈະຕ້ອງໄດ້ໄປເບິ່ງລາຍລະອຽດເພີ່ມຕື່ມ ສຳລັບແຕ່ລະໜ້າວຽກຂອງແຜນງານ;
   - ໄດ້ມີຂົງເຂດວຽກງານຈຳນວນໜຶ່ງທີ່ຈະໄດ້ຮັບການສະໜັບສະໜູນດ້ານວິຊາການ ທີ່ທາງຊ່ຽວຊານກອງທຶນໂລກໄດ້ປະເມີນອອກມານັ້ນ ແມ່ນເປັນຂົງເຂດວຽກງານທີ່ທາງຝຣັ່ງໄດ້ໃຫ້ການສະໜັບສະໜູນຢູ່ ດັ່ງນັ້ນ ຈະຕ້ອງໄດ້ເຮັດວຽກຮ່ວມກັນ ແລະ ວາງແຜນລ່ວງໜ້າໃວ້ເປັນຢ່າງດີ ເພື່ອລຶກລ້ຽງການເຮັດກິດຈະກຳຊ້ຳຊ້ອນກັນ;
   - ຜູ້ປະສານງານ ສຳລັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້ໃນອະນາຄົດ ກັບທີມງານຊ່ຽວຊານກອງທຶນໂລກ ແມ່ນມອບໃຫ້ທາງກອງເລຂາຄະນະກຳມະການປະສານງານຂອງກອງທຶນໂລກ.
2. **ການຂໍນຳໃຊ້ເງິນຮ່ວງລາຍໄດ້ຈາກໂຄງການຂອງ PSI:**
   ການລົງນາມຮັບຮອງເອົາ ການຂໍງົບປະມານເພີ່ມຈຳນວນ 3,350 ໂດລາ ຕໍ່ເດືອນ ສຳລັບປີ 2018-2020 (ເງິນຮ່ວງລາຍໄດ້ຈາກການຂາຍຖົງຢາງອານາໄມ ໃນປີ 2018-2020) ເພື່ອຈັດຕັ້ງປະຕິບັດກິດຈະກຳການໂຄສະນາເຜີຍແຜ່ການນຳໃຊ້ຖົງຢາງອານາໄມ ຂອງ PSI ແມ່ນ ໃຫ້ກອງເລຂາ ສົ່ງບົດສະເໜີດັ່ງກ່າວນີ້ ໃຫ້ທາງຄະນະກຳມະການບໍລິຫານງານກອງທຶນໂລກພິຈາລະນາ ແລະ ລົງນາມຜ່ານທາງອີເມວ ເນື່ອງຈາກວ່າອົງປະກອບຂອງກອງປະຊຸມບໍ່ຄົບ.

3. **ການສະເໜີຄວາມຄືບໜ້າກ່ຽວກັບການປິດເງິນຊ່ວຍເຫຼືອຂອງຮອບຜ່ານມາ ແລະ ເງິນຊ່ວຍເຫຼືອຮອບໃໝ່:**
   - ໃຫ້ PMU ລາຍງານໂດຍສັງລວມກ່ຽວກັບໜ້າວຽກດ້ານການຄຸ້ມຄອງທີ່ຈະຕ້ອງໄດ້ແກ້ໄຂ ແລະ ການມອບໂອນຊັບສິນທັງໝົດຂອງໂຄງການໃນໄລຍະຜ່ານມາ ຕໍ່ກອງປະຊຸມຄະນະກຳມະການບໍລິຫານງານກອງທຶນໂລກໃນຄັ້ງຕໍ່ໄປ;
   - ເລື່ອງເງິນສົມທົບຂອງລັດຖະບານ: ປະທານກອງປະຊຸມ ໄດ້ແນະນຳໃຫ້ເອົາບັນຫາດັ່ງກ່າວນີ້ເຂົ້າໃນວາລະຂອງກອງປະຊຸມຂອງຄະນະກຳມະການບໍລິຫານງານກອງທຶນໂລກໃນຄັ້ງຕໍ່ໄປ;
   - ກະຊວງການເງິນ ສະເໜີໃຫ້ທາງກະຊວງສາທາລະນະສຸກ ສົ່ງບົດລາຍງານກ່ຽວກັບການໂອນຊັບສິນຂອງໂຄງການ ແລະ ບົດລາຍງານການເງິນຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຂອງຮອບວຽນຜ່ານມາ ສຳລັບປີ 2015-2017 ໃຫ້ກະຊວງການເງິນ.

4. ບັນຫາອື່ນໆ ແລະ ການປິດກອງປະຊຸມ:

- ການສະເໜີຄວາມຄືບໜ້າກ່ຽວກັບບົດສະເໜີໂຄງການຮ່ວມຂອງຫຼາຍປະເທດ ສຳລັບແຜນງານ HIV ແລະ TB: ປະຈຸບັນນີ້ ທາງທີມງານຊ່ຽວຊານ ແລະ ແຜນງານແຫ່ງຊາດ ໄດ້ກຳລັງສຶກສາຄົ້ນຄວ້າຢູ່, ບົດສະເໜີດັ່ງກ່າວນີ້ ຈະຕ້ອງໄດ້ສົ່ງໃຫ້ຄະນະກຳມະການປະສານງານພາກພື້ນ ( RCM) ພາຍໃນວັນທີ 27 ເມສາ 2018. ດັ່ງນັ້ນບົດສະເໜີໂຄງການດັ່ງກ່າວນີ້ ຈະຕ້ອງໄດ້ຜ່ານການປຶກສາຫາລື ໂດຍ RMC, OC ແລະ ລົງນາມຮັບຮອງໂດຍ ກປກທລ ໃນເວລາອັນເໝາະສົມ.
- ການສະເໜີຄວາມຄືບໜ້າກ່ຽວກັບການສະໝັກຂໍທຶນຊ່ວຍເຫຼືອນຳຝຣັ່ງ: ທາງແຜນງານແຫ່ງຊາດຕ້ານເອດ ແລະ ຄູ່ຮ່ວມງານ ໄດ້ສົ່ງບົດສະເໜີໂຄງການດັ່ງກ່າວນີ້ ໃນວັນທີ 23/3/2018.
- ການຂໍເງິນເພີ່ມສຳລັບແຜນງານ HIV ຈຳນວນສີສອງລ້ານໂດລາ ສຳລັບແປດປະເທດ: ຫ້ອງການຜູ້ໄດ້ຮັບທຶນຕົ້ນຕໍແມ່ນຢູ່ກຸງເທບ ແລະ ສ່ວນຜູ້ໄດ້ຮັບທຶນຫຍ່ອຍ ແມ່ນຢູ່ແຕ່ລະປະເທດ. ປະຈຸບັນນີ້ ທາງແຜນງານແຫ່ງຊາດ ຍັງບໍ່ໄດ້ຮັບຂໍ້ມູນຄວາມຄືບໜ້າໃດໆເທື່ອ ແລະ ຂໍໃຫ້ຄູ່ຮ່ວມງານ UNAIDS ຊ່ວຍຕິດຕາມຄວາມຄືບໜ້າດັ່ງກ່າວນີ້ດ້ວຍ;

ກອງປະຊຸມໄດ້ດຳເນີນໄປເປັນເວລາສາມຊົ່ວໂມງ ແລະ ໄດ້ສິ້ນສຸດລົງໃນເວລາ 12:00 ໃນຕອນທ່ຽງຂອງວັນທີ 04 ເມສາ 2018.

ນະຄອນຫຼວງວຽງຈັນ, ວັນທີ 06/04/2018

| ປະທານຮ່ວມກອງປະຊຸມ | ຜູ້ສັງລວມເນື້ອໃນກອງປະຊຸມ |
|---|---|
| ທ່ານ ນາງ ດຣ. ສຸລານີ ຈັນສີ | ທ່ານ ໜູກອນ ທະລັງສີ |